# ທຄຕລ ໄດ້ຮັບລາງວັນນັກທຸລະກິດຊັ້ນນຳດີເດັ່ນ ຄົບຮອບ 35 ປີ ຂອງ ສຄອຊ




**ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ໄດ້ເຂົ້າຮ່ວມງານມອບລາງວັນນັກທຸລະກິດຊັ້ນນຳດີເດັ່ນ ປະຈຳປີ 2025 ເນື່ອງໃນໂອກາດ ຄົບຮອບ 35 ປີ ຂອງການສ້າງຕັ້ງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ເຊິ່ງພິທີດັ່ງກ່າວ ໄດ້ຈັດຂຶ້ນທີ່ ຫໍປະຊຸມແຫ່ງຊາດລາວ ໃນຕອນແລງ ວັນສຸກ 14 ພະຈິກ 2025.




ເປັນກຽດເຂົ້າຮ່ວມໃນພິທີມີ **ພະນະທ່ານ ສອນໄຊ ສີພັນດອນ (ນາຍົກລັດຖະມົນຕີແຫ່ງ ສປປ ລາວ)**, ມີບັນດາທ່ານລັດຖະມົນຕີ-ຮອງລັດຖະມົນຕີ, ປະທານ-ຮອງປະທານ ສຄອຊ, ຫົວໜ່ວຍທຸລະກິດແຫ່ງຕ່າງໆ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ. ໃນງານດັ່ງກ່າວ, ທຄຕລ ໄດ້ຮັບລາງວັນນັກທຸລະກິດຊັ້ນນຳດີເດັ່ນ ໃນຂະແໜງການເງິນ-ການທະນາຄານ ເຊິ່ງໃຫ້ກຽດມອບໂດຍ **ທ່ານ ມະໄລທອງ ກົມມະສິດ (ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ)** ແລະ ຕາງໜ້າ ທຄຕລ ເຂົ້າຮັບໂດຍ **ທ່ານ ນາລິນ ສີລະວົງສິດ (ຮອງຜູ້ອຳນວຍການ ທຄຕລ)**.



ໃນໂອກາດດັ່ງກ່າວ, **ພະນະທ່ານ ສອນໄຊ ສີພັນດອນ** ໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມມຸ່ງໝັ້ນ ແລະ ແນວຄວາມຄິດສ້າງສັນ ຂອງນັກທຸລະກິດໃນ ສປປ ລາວ ໂດຍຄວາມສຳເລັດການພັດທະນາເສດຖະກິດຂອງຊາດ ລ້ວນແລ້ວແຕ່ແມ່ນ ໝາກຜົນການປະກອບສ່ວນຈາກ ພາກເອກະຊົນ ທີ່ປຽບດັ່ງ ຈຸລັງເສດຖະກິດ ທີ່ສຳຄັນໃນການຂັບເຄື່ອນ, ພ້ອມທັງເນັ້ນໃຫ້ທຸກພາກສ່ວນ ສືບຕໍ່ສຸມໃສ່ການເຄື່ອນໄຫວ ໄປຕາມນະໂຍບາຍເສດຖະກິດສີຂຽວ ແລະ ຍືນຍົງຂອງ ສປປ ລາວ ໃນແຜນພັດທະນາແຫ່ງຊາດ ຄັ້ງທີ 10 (2026–2030).

**ຂ່າວໂດຍ:** ຂະແໜງພົວພັນນັກລົງທຶນ ແລະ ຮ່ວມມືສາກົນ https://www.bcel.com.la/ Email: bcelhqv@bcel.com.la